#18

# ຫ່ວງໄຍສິ່ງທີ່ສ້າງ




ວັນເສົາມື້ໜຶ່ງ, ກຸ່ມໄວໜຸ່ມຂອງ ວິຊ້າ ແລະ ຈິນດາໄດ້ພາກັນອອກແຮງງານ ອານາໄມຂີ້ເຫຍື້ອໃນໝູ່ບ້ານ.
ແຕ່ກ່ອນ, ບ້ານຂອງພວກເຮົາບໍ່ໄດ້ມີຂີ້ເຫຍື້ອຫຼາຍ, ເຈົ້າວ່າບໍ?
ແມ່ນແລ້ວ, ບ້ານຂອງພວກເຮົາເຄີຍສະອາດງາມຕາ.
ບ້ານຂອງວິຊ້າ ແລະ ຈິນດາເຄີຍເປັນບ້ານທີ່ງົດງາມ.


ແລ້ວຜູ້ຄົນກໍເລີ່ມຖິ້ມຂີ້ເຫຍື້ອຊະຊາຍໃນແຕ່ລະບ່ອນ.
ຕາມຫົນທາງ.
ໃນໜອງບຶງ.
ຢູ່ນອກເຮືອນ.
ຢູ່ໜ້າໂຮງຮຽນ.
ຂີ້ເຫຍື້ອເລີ່ມກອງໃຫຍ່ຂຶ້ນ....


ແລ້ວໝູ່ບ້ານກໍບໍ່ສະອາດຈິບງາມຄືດັ່ງທີ່ເຄີຍເປັນ.ພວກໝູ ແລະ ແມງວັນໄດ້ແຜ່ເຊື້ອໂຣກ, ເຊິ່ງເຮັດໃຫ້ມີຜູ້ເຈັບປ່ວຍຫຼາຍຂຶ້ນ.
ຄລີນິກ


ເປເຊິ່ງຢູ່ບ້ານດຽວກັນກັບວິຊ້າ ແລະ ຈິນດາ. ລາວຖິ້ມຂີ້ເຫຍື້ອຊະຊາຍໂດຍບໍ່ສົນໃຈ.
ເອີະ
ຄິດກ່ອນແມ້ວ່າມີຫຍັງຢູ່ທາງຫຼັງ
ແລ້ວຈິ່ງຖິ້ມຂີ້ເຫຍື້ອຫັ້ນ.
ໂຮງໝໍ
ເປໄດ້ໄປໂຮງໝໍ.


ຂ້ອຍຄິດວ່າຂາຂອງຂ້ອຍ
ຄືຊິບໍ່ເປັນຫຍັງຫຼາຍ.
ທ່ານໝໍເປັນຫຍັງຄົນເຈັບ
ປ່ວຍຄືມີຫຼາຍແທ້?
ຜູ້ຄົນສ່ວນຫຼາຍເຈັບປ່ວຍ ເພາະຍ້ອນສະ
ພາບແວດລ້ອມອ້ອມຂ້າງພວກເຮົາບໍ່ສະ
ອາດ ແລະ ສຸຂະອະນາໄມຍັງຕ່ຳ. ຜູ້ຄົນ
ສ່ວນຫຼາຍບໍ່ຮູ້ຈັກເບິ່ງແຍງໝູ່ບ້ານ
ໄດ້ດີເທື່ອ.
ແລ້ວພວກເຮົາຈະ
ແກ້ໄຂບັນຫາເຫຼົ່ານີ້
ໄດ້ແນວໃດ?
ພວກເຮົາຕ້ອງ:
ຢຸດຊື້ສິ່ງຂອງຢ່າງຫຼວງຫຼາຍ
ແລະ ນຳໃຊ້ສິ່ງທີ່ພວກເຮົາມີ
ແລ້ວຄືນໃໝ່.
ຖິ້ມຂີ້ເຫຍື້ອ
ໃສ່ຖັງຂີ້ເຫຍື້ອ.
ນຳໃຊ້ສິ່ງທີ່ຍັງ
ໃຊ້ໄດ້ຢູ່ຄືນໃໝ່.


ເປ ເລີ່ມຄິດກ່ຽວກັບສະພາບແວດລ້ອມຂອງໝູ່ບ້ານຂອງລາວ.
ຂ້ອຍຢາກຮູ້ວ່າ ແມ່ນຫຍັງທີ່ຂ້ອຍຈະເຮັດໄດ້ກ່ຽວກັບມົນລະພິດ.
ໃຫ້ຂ້ອຍຊ່ວຍອານາໄມນຳພວກເຈົ້າໄດ້ບໍ່?
ແນ່ນອນ! ມາເລີຍ!
ຫຼັງຈາກອານາໄມໝູ່ບ້ານ, ເປ ກໍຊື້ໂສດາດື່ມໄປນຳທາງ.
ປົກກະຕິແລ້ວ ຂ້ອຍຈະແກວ່ງກະປ໋ອງຖິ້ມໂດຍບໍ່ຄິດຫຍັງ.
ແຕ່ດຽວນີ້ ຂ້ອຍຮູ້ແລ້ວວ່າຂ້ອຍບໍ່ຄວນຖິ້ມໄປຊະຊາຍ.
ການປ່ຽນແປງເລີ່ມຈາກຂ້ອຍ.


ເຖິງແມ່ນວ່າພວກເຮົາຍັງໜຸ່ມນ້ອຍ, ພວກເຮົາສາມາດເຮັດໃນສິ່ງທີ່ແຕກຕ່າງ . ຫວັງວ່າຄົນອື່ນຈະເຫັນແບບຢ່າງຂອງ ພວກເຮົາ ແລະ ປ່ຽນແປງຄືກັນ.
ພຣະເຈົ້າໄດ້ສ້າງໂລກນີ້ເພື່ອພວກເຮົາ. ຈົ່ງເບິ່ງແຍງມັນໃຫ້ດີ.


ກຸ່ມໄວໜຸ່ມໄດ້ສືບຕໍ່ອານາໄມໝູ່ບ້ານ. ແລ້ວກໍເຮັດໃຫ້ໝູ່ບ້ານສະອາດງາມຕາຂຶ້ນເທື່ອລະກ້າວ ແລະ ຊີວິດຂອງແຕ່ລະຄົນກໍດີຂຶ້ນ.





ຄຳຖາມ

1. ບ່ອນໃດທີ່ເຈົ້າມັກຖິ້ມຂີ້ເຫຍື້ອເປັນປະຈຳ? ບ່ອນໃດທີ່ເໝາະສົມທີ່ຈະຖິ້ມຂີ້ເຫຍື້ອ?

2. ຈະມີຫຍັງເກີດຂຶ້ນ ຫຼັງຈາກທີ່ເຈົ້າຖິ້ມຂີ້ເຫຍື້ອຊະຊາຍ? (ຕົວຢ່າງເຊັ່ນ: ລົມພັດມັນປິວໄປ, ບາງຄົນຈູດຂີ້ເຫຍື້ອ, ຂີ້ເຫຍື້ອເປັນກອງໃຫຍ່ຂຶ້ນ ແລະ ສົ່ງກິ່ນເໝັນ, ຝົນຕົກລ້າງຂີ້ເຫຍື້ອໄຫຼໄປ, ໝາຄາບແລ່ນໄປມາ, ເຮັດໃຫ້ເກີດມົນລະພິດໃນນ້ຳ ແລະ ດິນ, ແລະ ອື່ນໆ.)

## ກິດຈະກຳ

ມີສິ່ງທີ່ເຈົ້າສາມາດເຮັດເພື່ອເຮັດໃຫ້ໝູ່ບ້ານຂອງເຈົ້າສະອາດງາມຕາ.

1. ຈົ່ງຕິດສະຕິກເກີ້ ເພື່ອຊ່ວຍເຕືອນໃຫ້ເຈົ້າຖິ້ມຂີ້ເຫຍື້ອໃນຖັງຂີ້ເຫຍື້ອ. ຕິດມັນໄວ້ໃນບ່ອນໃດໜຶ່ງທີ່ເຈົ້າແລະຄອບຄົວສາມາດເຫັນໄດ້ງ່າຍ.
2. ມີສິ່ງໃດອີກທີ່ທີ່ເຈົ້າສາມາດເຮັດໄດ້ເພື່ອຊ່ວຍຮັກສາໃຫ້ໝູ່ບ້ານຂອງເຈົ້າສະອາດຈົບງາມ.



ຢ່າໃຫ້ຜູ້ໃດໝິ່ນປະໝາດຄວາມໜຸ່ມຂອງເຈົ້າ,
ແຕ່ ຈົ່ງເປັນແບບຢ່າງໃຫ້ຄົນທີ່ເຊື່ອທັງຫລາຍ
ໃນທາງກິຣິຍາແລະວາຈາ ໃນຄວາມຮັກ ໃນຄວາມເຊື່ອ
ແລະໃນຄວາມບໍຣິສຸດຂອງເຈົ້າ. 1 ຕີໂມທຽວ 4:12.





បងធម៌កម្ពុជា
ALONGSIDERS CAMBODIA

www.alongsiders.org
Email: serey@alongsiders.org
: